ດວງຈຳປາ



# ຮັກດອກ

## ...ຈົ່ງບອກມາ

ໃນວົງການຂີດຂຽນ ດວງຈຳປາ ເປັນທີ່ຮູ້ຈັກກັນທົ່ວໄປ ເພາະຊື່ນີ້ ປາກົດຢູ່ໃນປຶ້ມ ແລະ ວາລະສານ ຕ່າງໆ ມາກວ່າ 47 ປີ ໃນຖານະນັກຂຽນ ແລະ ບັນນາທິການ, ເປັນຄະນະຜູ້ກໍ່ຕັ້ງ ແລະ ຫົວຈັກສຳຄັນຂອງ ວາລະສານ ວັນນະສິນ.



ນັບແຕ່ປີ 1989 ເປັນຕົ້ນມາ ດວງຈຳປາ ວາງມືຈາກວຽກງານຂີດຂຽນ ເພື່ອທຸ່ມເທເວລາໃສ່ວຽກງານ ປົກປັກຮັກສາ ຫນັງສືໃບລານ ອັນເປັນໂຄງການຮ່ວມມື ລາວ-ເຢຍຣະມັນ ຖືໄດ້ວ່າ ເປັນການເຂົ້າສູ່ແຫລ່ງ ພູມປັນຍາ ທີ່ບັນພະບຸລຸດລາວ ປະໄວ້ໃຫ້ເປັນມໍລະດົກ ທາງວັດທະນະທຳຂອງຊາດ ຊຶ່ງ ດວງຈຳປາ ໃຫ້ຄວາມສົນໃຈເປັນພິເສດ.

ໃນປີ 1994 ເຖິງວ່າອາຍຸລ່ວງສູ່ເລກຫ້າແລ້ວ ກໍຕາມ ດວງຈຳປາ ກໍຍັງຫ້າວຫັນ ແລະຈັດຕັ້ງ ສູນວັດທະນະທຳເດັກ (ສ.ວ.ດ) ທັງນີ້ ເພື່ອຢາກບັນລຸ ເຈດຕະນາລົມອັນສູງສົ່ງ ນັ້ນຄື ສ້າງຄົນຮຸ່ນໃຫມ່ ໃຫ້ຮູ້ຈັກ ແລະຮັກຫອມ ວັດທະນະທຳຂອງຊາດຕົນ ທັງສົ່ງເສີມການອ່ານ ການແຕ້ມຮູບ ຕັ້ງແຕ່ຍັງເຍົາໄວ.

ດັ່ງນີ້ ເດັກນ້ອຍໃນຫລາຍເມືອງ ຫລາຍແຂວງ ຈຶ່ງຮູ້ຈັກ ດວງຈຳປາ ໃນນາມ ປ້າດາລາ.

(ຕໍ່ ພັບດ້ານຫລັງ)

# ຮັກດອກ... ຈຶ່ງບອກມາ



*ດວງຈຳປາ*

ຮັກດອກ ຈຶ່ງບອກມາ

ໂຮມ ບົດກອນ ຂອງ **ດວງຈຳປາ**

---

ບັນນາທິການ

*ດວງເດືອນ ບຸນຍາວົງ*

*ໂອທອງ ຄຳອິນຊູ*

ອອກແບບ ຈັດໜ້າສິລະປະ

*ບໍລິສັດ ດອກເກດ ຈັດພິມຈຳກັດ*

ພາບປະກອບ

*ດວງແຂ ບຸນຍາວົງ*

*ອຸດົມພອນ ບຸນຍາວົງ*

*ສະມິດທິ ທະນານິທິໂຊດ*

*ຈະເລີນໄຊ ພົມມະວົງສາ*

*ໂຄງການປົກປັກຮັກສາໃບລານລາວ*

ສະຫງວນລິຂະສິດ ແລະ ຈັດພິມໂດຍ

ນາງ ດາຣາ ກັນລະຍາ

ທະບຽນພິມເລກທີ: 51 ພຈ 2005

ພິມຄັ້ງທີ 1 ເມສາ 2005

ຈຳນວນ 3000 ຫົວ

ພິມທີ່ ຈຳປາການພິມ

# ສາລະບັນ

5 - ຄຳນິຍົມ

6 - ຈາກຜູ້ຂຽນ

## ພາກທີ 1

### ຄວາມງາມ ຄວາມຮັກ ຄອບຄົວ

8 - ຄວາມງາມຂອງແມ່

10 - ແດ່ແມ່ຂອງລູກ

12 - ດອກບົວ

13 - ຄະນຶງຫາ

16 - ອ້າຍແລະເອື້ອຍ

18 - ເອື້ອຍແລະອ້າຍ

20 - ຄຶດຍາກບາດແຕ່ງ

22 - ຢ່າຄຶດຍາກ

24 - ຄຳຕອບ

27 - ອູ້ເກົ່າ

30 - ບໍ່ມີແຕ່ເຈົ້າ

34 - ເຮືອນຮ້າງ

36 - ປ່ຽນຊອງ

38 - ພໍ່ຢູ່ໃສ ?

## ພາກທີ 2

### ໄປຕາມທາງ

43 - ກາງນາ

44 - ເອົ້າ

45 - ຂອບໃຈ

46 - ຂໍທາງແດ່

48 - ນ້ຳໃຈ

51 - ສາວຂາຍຜັກ

55 - ລະວັງທາງດີ !

57 - ເຜັດຊະຄາດ

61 - ຊ່າງເຮັດໄດ້ບໍ !

## ພາກທີ 3

# ຮັກດອກຈຶ່ງບອກມາ

66 - ຮຽນແດ່ - ພາສາລາວ !

69 - ຕອບບ່າວວຽງ

71 - ລາຍເຊັນ

73 - ເງິນໂມງ

75 - ສະເໜີພາບ

78 - ທຸກແທ້ບໍ້...

80 - ເຫລືອບໍ່ພໍ !

82 - ເຮືອນໂພນ ກັບ ທາງຫລວງ

83 - ທຸກແຕ່ກ່ອນ

88 - ສິ້ນແວ່ງ

90 - ບອກແລ້ວບໍ່ຟັງ

92 - ລະວັງ !

94 - ແອບເອົາ

# ຄຳນິຍົມ

ຂໍສະແດງຄວາມຊົມເຊີຍຢ່າງສຸດປຶ້ມ ດ້ວຍອາລົມຈິດພິດສະຫວາດ ວາດກະວີຂອງ ດວງຈຳປາ "ຮັກດອກ ຈຶ່ງບອກມາ" ເປັນໜັງສືໂຮມຄຳກອນ ທີ່ອ່ານເຂົ້າໃຈງ່າຍ ຄອບຄຸມເນື້ອຫາສາລະໜ້າຮູ້ ທີ່ສະທ້ອນເຖິງພຶດຕິກຳ ຂອງສິ່ງທີ່ມີຊີວິດ ເຄື່ອນໄຫວໃນສັງຄົມ ແຫ່ງຍຸກໄຮເທັກ ໄຮ້ພົມແດນ ອັນທີ່ເດັ່ນ ແລະປະທັບໃຈ ກໍຄື ດວງຈຳປາ ຈົກຈາກຕັບບີໄສ້ພຸງ ອອກມາຮ່າຍກອນ ທີ່ເຕັມໄປດ້ວຍສີສັນວາທະສິນ ຄົມຄາຍ ແຝງດ້ວຍເນື້ອຫາທີ່ກ່ຽວກັບຄວາມ "ນ້ຳນິ່ງໄຫລເລິກ ໃນຄອບຄົວ" ຮວມເຖິງວິທີຫລຸດຜ່ອນ ແລະແກ້ໄຂຄວາມ ຂັດຂ້ອງໝອງໃຈ ຂອງຕົວລະຄອນທີ່ກ່ຽວຂ້ອງ ອີກທັງຍັງສະແດງດ້ວຍຕົວ ຢ່າງໃຫ້ເຫັນພາບຂອງບັນຫາທີ່ຕາມມາໄດ້ຊັດເຈນ ການຮຽບຮຽງແຕ່ລະຫົວຂໍ້ຂອງບົດກອນ ເຮັດໃຫ້ໜ້າສົນໃຈ ໜ້າຕິດຕາມອ່ານ ເປັນປະໂຫຍດຢ່າງຍິ່ງຕໍ່ນັກພັດທະນາຄົນ ສັງຄົມ... ຕໍ່ນັກຫລິ້ງໄຫລກະວີ ແລະປວງຊົນທົ່ວໄປ.

ອ່ານເຖີດ ເພາະຈະໃຫ້ບົດຮຽນອັນລ້ຳຄ່າຈາກຊີວິດຄອບຄົວ ທີ່ຂີ້ພ້ຽງກຳລັງເລີ່ມຈັບ ແລະຈະເປັນແວ່ນແຍງໃຫ້ແກ່ຜູ້ສະແຫວງຫາ ແສງສະຫວ່າງເພື່ອພັດທະນາສັງຄົມ ຄອບຄົວ ໃຫ້ເປັນສະຖາບັນ ທີ່ມີຄວາມສຳຄັນຍິ່ງ ໃນຊີວິດຂອງມະນຸດ ຄອບຄົວທີ່ດີມີຄວາມສຸກ ຈະເປັນພື້ນຖານໃຫ້ແກ່ການຫລໍ່ຫລອມສະມາຊິກໃໝ່ທີ່ດີ ໃຫ້ແກ່ສັງຄົມໃນຍຸກໃໝ່.

ວຽງຈັນ ວັນທີ 7 ເມສາ 2005

*ກິງເດືອນ ເນດຕະວົງ*

ຜູ້ອຳນວຍການຫໍສະໝຸດແຫ່ງຊາດ ໂຄງການສົ່ງເສີມການອ່ານແຫ່ງຊາດ

# ຈາກຜູ້ຂຽນ.....ປ່າງາາພາໄປ

ໃຜວ່າ ດວງຈຳປາປາກກ້າ / ເວົ້າວ່າບໍ່ເກງໃຈ
ແນວທີ່ ຄົນເຄີຍອົດ / ບໍ່ຈົ່ມຈາ ກໍແຈງແຈ້ງ
ແກງບໍ່ມີຂອງສົ້ມ / ເຜັດເຄັມ ບໍ່ນົວປາກ
ຄົນບໍ່ຕີຜ່ອງຍ້ອງ / ບໍ່ຄອງພໍ້ບ່ອນ ຈະເລີນ ດອກນາ

ການທີ່ ຂຽນກ່າວອ້າງ / ກໍເພື່ອກໍ່ການດີ
ຄວາມບໍ່ມີ ບໍ່ເຄີຍຫາ / ແຕ່ງເຕີມໃຫ້ກາຍເຄົ້າ
ປາກກາ ພາເພີນເວົ້າ / ເອົາຄວາມຈິງມາສອດໃສ່
ໝົດສະໄໝ ມີແຕ່ຍ້ອງ / ຍໍຂຶ້ນ ແຕ່ໂຕ ແລ້ວເດ້

ແນວທາງ ພັກບອກໄວ້ / ໃຫ້ຕິວ່າແກມຊົມ ວ່ານາ
ຍົກເຫດການໂຕຈິງ / ແນ່ແນວບຳຊື້
ເຫັນເຫດຜົນທາງແກ້ / ແນສອນເສີມບອກ
ຊອກຫາຜູ້ລະດ້ານ / ທາງແກ້ຫາກຊິມີ

ຄວາມຈິງ ມີຮອດຮ້ອຍ / ຂຽນວ່າ ບໍ່ພໍສອງ ດອກເດີ້
ພໍແຕ່ ເຕືອນໃຈຄິດ / ຮ່ຳຮອນທາງແກ້
ຫີນທາງເຜ ຄົນບໍ່ພາກັນສ້າມ / ຄອງໃຜມາຊອຍ
ມີຫຍັງ ຟ້າວຟັງແກ້ / ຢ່າເສຍຫຍ້າທັບຂີ້ໝາ ແທ້ເນີ້

ດວງຈຳປາ

*ພາກທີ 1*

# ຄວາມງາມ
# ຄວາມຮັກ
# ຄອບຄົວ

24/VII



# ຄວາມງາມຂອງແມ່

ກອນນີ້ ເກີດຈາກຄວາມຮູ້ສຶກ ເມື່ອໄດ້ແຍງພາບແຕ້ມ "ແມ່ອຸ້ມກອດລູກນ້ອຍດ້ວຍຄວາມທະນຸຖະໜອມທອມຮັກ" ເບິ່ງແລ້ວ ເຫັນວ່າ ນາງເປັນຕົວແທນໃຫ້ແກ່ແມ່ຍິງ ທຸກເຫລົ່າ ທຸກອາຊີບ. ຄວາມງາມ ອັນຍອດຍິ່ງຂອງແມ່ຍິງ ແມ່ນແນວນີ້ !

ແມ່ຈະ ຍິ່ງໃຫຍ່ດ້ວຍ    ກອງກຽດຕິຍົດ
ມີວິຊາສູງ    ວ່າການນຳໜ້າ
ນຳພາບ້ານ    ການເມືອງລະດັບຊາດ
ເປັນຊ່າງ ນັກກໍ່ສ້າງ    ຄົນຊ້ອງຊາລື ກໍດີ

ແຕ່ວ່າ ແມ່ຍ່ອມບໍ່ລະເວັ້ນ    ໜ້າທີ່ມານດາ
ງາມແມ່ ງາມໃນສິນ    ວາດດູແລນ້ອຍ
ງາມແມ່ ງາມແຂນອ້ອມ    "ທອມ" ເອົາບຸດອ່ອນ
ງາມແມ່ ປະເສີດຍ້ອນ    ຄຸນລ້ຽງລ່ຳແຍງ ລູກນາ

*ມີນາ 1983*





# ແດ່ແມ່ຂອງລູກ

ຄຶດເຫັນແມ່ແລ້ວແຕ່ງອອກ
ໂຕເອງບໍ່ຄ່ອຍໄດ້ບອກແມ່
ໃນສິ່ງເຫລົ່ານີ້. ຍ້ອນວ່າ
ເປັນລູກສາວຜູ້ກົກ ຮູ້ສຶກວ່າ
ໂຕເອງໃຫຍ່ທັນ-ເປັນຜູ້
ຊ່ອຍແມ່ລ້ຽງນ້ອງ ມາແຕ່ຕອນ
ອາຍຸພຽງເກົ້າປີ ເປັນເພື່ອນລົມ
ເປັນຄູ່ປຶກສາ ບັນຫາຄອບຄົວ
ບໍ່ເຄີຍມີເວລາຄຶດຫາຄຳເວົ້າ
ມ່ວນໆ ປ້ອນໃສ່ຫູແມ່ ຈົນເທົ້າ
ໄດ້ລູກ-ລ້ຽງລູກໃຫຍ່ສູງ
ຈຶ່ງເຫັນວ່າ ໂຕເອງກໍຮັກແມ່ຄືກັນ
ກັບລູກອີກສິບສີ່ຄົນຂອງແມ່...

ມາລາຫອມຫ່ວງເຮົ້າ ໃນທົ່ວພິພົບ ກໍດີ
ຍົກມອບ ເວນວາງສະໜອນ ແມ່ຄຶງພຽງພ້ອມ
ຍັງໄປ່ທັນສະເໜີດ້າມ ດວງໃຈເຮົາລູກ
ປາກຸະໜານົບນ້ອມ ພະນົມແກ້ວແກ່ນໃຈ

ສະກຸນາຮ່ຳຮ້ອງ ສຽງມ່ວນຊວນສະດັບ
ທຸກທົ່ວທັງໂລກາ ຊື່ນຊົມແຊວຊ້ອງ
ຍັງໄປ່ທັນສຽງຮ້ອງ ມະໂນໃນຊ້ອຍຊື່ນ
ບຸດພ່ໍາ ເພັງເພື່ອເຈົ້າ ຫວັງໃຫ້ແມ່ຍິນ ດອກນາ

ຄວາມຮັກ ໃນແມ່ລົ້ນ ລວາດຝັ່ງນະທີໃຈ ລູກດາຍ
ຫາກ່າວ ຄຳໃດສະເໜີ ປຽບປານທັນອ້າງ
ຮັກແມ່ ມີພັນເທົ້າ ທະວີກີຕີ້ໂກດ
ຍັງໄປ່ ເຜີຍຜໍ່ໃຫ້ ເຫັນຮູ້ສ່ວນດຽວ ແມ່ເອີຍ

*ສິງຫາ 1974*

# ດອກບົວ

ມີໂອກາດໄດ້ຖ່າຍຮູບສາວງາມຊິບນະບິດ ມາເປັນໜ້າປົກປຶ້ມເບິ່ງ ທຳອິດ ກໍເຫັນເປັນສາວນ້ອຍທີ່ມີສີຮັກທຳມະດາ, ແຕ່ຜິວພັນສີດອກສະເດື່ອ ກ່ຳກ້ຽງສະອາດງາມເລີກ. ເມື່ອຖ່າຍຮູບອອກມາງາມຜ່ອງແຜ້ວ ກໍເລີຍແຕ່ງ ກອນນີ້ບັນຍາຍໃສ່.

ດອກບົວ ທຳມະຊາດເຊື້ອ ແກມເກີດກັບຕົມ
ຕົມຕົ່ມ ກິນດິນເປີ ແປດຄາວຄືຊິເປື້ອນ
ຍັງເລົ່າ ສີສັນຫລ້າງ ລາງຫອມຊ້ອຍຊື່ນ
ສົມທີ່ ເກັບຍົກໄວ້ ບູຊາໄຫວ້ແທ່ນພະທຳ

ປຸນດັ່ງ ນ້ອງອ່ອນນ້ອຍ ລູກຊາວປ່າຂາດອນ ພີ່ນີ້
ແດດຝົນ ທົນງານໜັກ ເຫື່ອໄຄໄຫລຍ້ອຍ
ມີ ໃຊ່ ເຄີຍຄອງພົ້ ຈັບຫອມປະທິນລູບ
ຜິວກໍ ຍັງຜ່ອງແຜ້ວ ສະເໝີແກ້ວກີບບົວ ແທ້ແລ້ວ

*ສິງຫາ 1988*

# ຄະນຶງຫາ

ເຄີຍຟັງເພັງຝຣັ່ງເກົ່າໆ ແຕ່ງໃນຊຸມປີ 1950 ພຸ້ນ ເຂົາບັນຍາຍເຖິງຄວາມຄຶດຄະນຶງຫາກັບ ພັນລະນາ ທຳມະຊາດບ້ານເຂົາ ກໍເລີຍແຕ່ງອອກມາໃຫ້ເປັນທຳມະຊາດ ແບບບ້ານເຮົາລອງເບິ່ງ. ໄດ້ລົງພິມໃນ " ໄຜ່ໜາມ "ສັງຄົມວິຈານລາຍເດືອນ ໃນປີ 1972. ຕອນນັ້ນ ບໍ່ໄດ້ຕິດໃຈຫຍັງຫລາຍ ພຽງແຕ່ແຕ່ງເພື່ອໃຫ້ມີກອນລົງພິມ ຕາມໜ້າທີ່ບັນນາທິການ ຜູ້ຮັບຜິດຊອບໜ້າກອນວ່າຊັ້ນສາ. ພໍມາປີ 1988 ຈະຈັດພິມປຶ້ມໂຮມເລື່ອງສັ້ນ " ກ່ອນຈະເຖິງວັນນີ້ " ກໍຍັງຢູ່ໃນອາລົມໂສກເສົ້າ ຄຶດຮອດ " ພໍ່ຂອງລູກ" ທີ່ຫາກໍຈາກໄປໄດ້ພຽງປີດຽວ ຈຶ່ງຈັດກອນນີ້ລົງພິມອີກ. ເທື່ອນີ້ ນັບເປັນຄັ້ງທີສາມ ຄວາມຮູ້ສຶກເກົ່າໆ ຍັງຟື້ນຄືນມາ ພາໃຫ້ອາໄລອາວອນ ຄືໃນກອນນີ້ແລ.

ສາຍຝົນ ລິນລົ່ງຍ້ອມ ພື້ນແຜ່ນພະສຸທາ ທີ່ພຸ້ນ
ກົບຂຽດ ຫອຍປູປາ ອົ່ງນອງໜອງນ້ຳ
ຍາມເດືອນເກົ້າ ໃນນາເຂົ້າອ່ອນ
ໃຈຜົ່ ຄຶດຮຸ່ງອ້າຍ ມີມື້ວມອດມະໂນ ແທ້ແລ້ວ

ລາຕີ ກວມກາດຟ້າ ດາວພ່າງພໍແສງ
ຈັນທະ ຈອນຈວນດັບ ມືດສີແສງເສົ້າ
ສາຍລົມໄລ້ ກາຍາໜາວສັ່ນ
ຈິດກະສັນ ໝ່ອມອ້າຍ ຍາມຮ້າງຫ່າງໄກ ນີ້ນໍ

ແມ້ງເມື່ອ ວັນຮຸ່ງເຊົ້າ ອະລຸນອ່ອນວຽນເຖິງ ກໍດີ
ນະພາຜັນ ອາບແສງສູນກ້າ

ຍາມແລງຄ້ອຍ ແຄມຂອງເຂີນຫາດ
ນ້ອງນັ່ງ ຄອຍພີ່ອ້າຍ ໃຈສະລັ້ງຫວັ່ງເວ

ແມ່ນວ່າ ຍາມຍ່າງຍ້າຍ ແປປ່ຽນລະດູການ
ວັນຄືນຄາຍ ຜ່ຽນຜັນມິເວັ້ນ
ຈັບຄານຄ້ອຍ ພະຫັດເສົາແຖມຖ່າຍ ກໍດີ
ນ້ອງຍັງ ຄຶດຜ່ອ້າຍ ບໍ່ມີເວັ້ນວ່າງເປັນ ດອກນາ

ຍາມມ່ວນ ຍິນຊື່ນຟ້ອນ ຮ້ອງອ່ອຍລຳຂັບ
ຄາວນັ້ນ ການງານພັກ ຊວ່າຊຸມສະຫລອງລ້ຽງ
ອ້າຍພີ່ ພາເຮີງຫລິ້ນ ທັດສະນາພູມປະເທດ
ຊົມສະຖານເອກອ້າງ ໂບຮານໃຫ້ເບີກເບີຍ

ທຳມະຊາດພ້ອມ ສວນອາດອຸດທິຍານ
ອອນຊອນ ມາລີບານ ເບັ່ງຈູມຈໍດື້ວ
ອ້າຍພີ່ ຍັງເຄີຍຊວ້ານ ດວງງາມເວນມອບ
ນ້ອງທ່ອນ ລືມລ່າຍໄດ້ ຄາວນ້ອມຮັບສະໜອງ ພີ່ນັ້ນ

ບໍ່ວ່າ ຝົນແລະແລ້ງ ຮ້ອນເຮັ້ງໜາວເຢັນ
ລະດູການລີຈັກ ປ່ຽນແປງໃຈນ້ອງ
ຍັງພະວົງຫາເຈົ້າ ຈອມຂວັນຍອດຂະໜ່ອມ
ອ້າຍພີ່ ເຊີນເຊື່ອໝັ້ນ ໃນນ້ອງເຮັ່ງທະວີ ບັ້ນເຖິ້ນ.

*ຕຸລາ 1972*



# ອ້າຍ ແລະ ເຂົາ

ໃນຕົ້ນປີ 1973 ພວມມີການໂຈດຂານກັນເຖິງສະພາບບ້ານເມືອງ ໃນໄລຍະເຈລະຈາໂຣມລາວ "ຈະໂຣມໄດ້ແທ້ບໍ່ " ຍັງມີຄົນສົງໄສ. ກອນນີ້ ຫວັງອອກມາສະກິດເຕືອນຫລາຍໆ ຄົນຢູ່ວຽງຈັນ ໃຫ້ຮູ້ເມື່ອວ່າ ຜູ້ທີ່ເປັນປະຊາຊົນ (ສົມມຸດວ່າ ແມ່ນນ້ອງນັ້ນລະ...) ເຂົາພວມຢູ່ໄກອອກໆ ເພາະໂຕເຈົ້າເອງ (ແມ່ນໃຜຄຶດເອົາໂລດ...) ປະພຶດໂຕໂອ້ອິ່ງ ອ້າງແຕ່ເງິນ ແລະຍຶດສັກອຳນາດ ນັ້ນລະຈຶ່ງເກີດມີຊ່ອງ ຫວ່າງ ເຮັດໃຫ້ນ້ອງຄຶດພໍ້ "ເຂົາ" ຜູ້ຊຶ່ງຮູ້ຈັກແບ່ງປັນຄວາມສຸກທຸກຂອງຊາວປະຊາ "ເຂົາ" ຊຶ່ງເຄີຍມາຢູ່ນຳພວກເຮົາສະໄໝຫນຶ່ງ (ໂຣມລາວ ຄັ້ງທີ 2) ແລ້ວກໍຈາກໄປ... ແລະເວລານີ້ "ເຂົາ" ຫລືພວກເພິ່ນເຫລົ່ານັ້ນຢູ່ໜີ້ແລ້ວ !

ຮັກຂອງອ້າຍ...

| | |
|---|---|
| ໂຣມເຮັ່ງອ້າງ | ໂອ້ອິ່ງຊິງຫານ |
| ອາສາພັກ | ເພິ່ງແພງພຽນເກື້ອ |
| ອຸດົມດ້ວຍ | ເງິນແຫວນແສນສິ່ງ (ສົ້ລາດບັງຫລວງມາ) |
| ຮຽມຫ່ອນດ້ອຍ | ປະສົງໄດ້ທຸກສິ່ງອັນ |
| ພີ່ກໍ ພູມພາກດ້ວຍ | ດອມພວກອະສັງຫາ |
| ເຫີມເຫີ່ ການສັງຄົມ | ກຽດຕິການກຽນກ້ອງ (ແບບບ້າຍົດ) |
| ຄືນຄ່ຳ ມີໝອງເສົ້າ | ບໍລິວານອ້ອມແຫ່ |
| ດູດັ່ງ ກ້ອງລຸ່ມຫລ້າ | ນົງນ້ອງຍອດຍິງ ພຸ່ນແລ້ວ ! |

ທີ່ວ່າ ພີ່ບໍ່ໄຄ່ຊວາດພໍ້ ແຫງຊອດຄວາມຄຶດ ນ້ອງນີ້
ພີ່ບໍ່ ເຄີຍຫວງການ ຫ່ວງໃຍໃຈເອື້ອ
ຄວາມນິຍົມນ້ອງ ມີອາທອນການໄກ່
ດີແຕ່ ອຸ້ມໂຫບໃຫ້ ຄຳນ້ອຍບໍ່ຜໍ່ຟັງ

ຄວາມມິດ ເຫີນຫ່າງດັ້ນ ດັ້ນຊອດເຮົາສອງ
ພີ່ຫາກ ເຮີງແຮງກີ່ ຝ່າຍດຽວດາອ້າງ
ມີແຕ່ ເງິນ-ພູມ-ຊັ້ນ ອິດທິພົນອຳນາດ (ມືດ?)
ເສີມສິ່ງຍູ້ ໃຫ້ລືລ້ຳເລີດລອຍ

ເຂົາ... ຜູ້ນັ້ນ !
ຢືນຢູ່ ເທິ່ງແຜ່ນພື້ນ ດອມຊາດຊາວປະຊາ
ປັນແບ່ງ ຄວາມສຸກທຸກ ລາສະດອນດາກ້ວນ
" ອຸດົມການແຈ້ງ " ແປງທາງທຽວຮອດ
ສະແຫວງບ່ອນຢັ້ງ ຊີບໄດ້ເພິ່ງເຢັນ

ຄວາມຮັກເຂົາ...
ເສີມສິ່ງນ້ອງ ສຳນຶກຊາດຂອງຕົນ
ຄະນິງຄະເນຫາ ສິ່ງຄວນຟູຟື້ນ
ປະເພນີກະໜອມໄວ້ ເພີງແພງພ້ອມພວກ
"ເຂົາ" ຈຶ່ງຍັງຢູ່ຢັ້ງ ສະກິດພັ້ນແກ່ນໃຈ ນ້ອງນາ.....!

*ແຕ່ງປີ 1973*

24/VII
ຫ້າມຈຳໜ່າຍ

# ເຂົາ ແລະ ອ້າຍ

ຕົກມາຮອດປີ 1983 " ເຂົາ " ແມ່ນຜູ້ທີ່ຈາກໄປແລ້ວ ສ່ວນ " ອ້າຍ " ແມ່ນຜູ້ຢູ່ນຳເວລານີ້. ກອນນີ້ຂຽນເມື່ອໄດ້ຮຽນການເມືອງລະດັບສູນກາງຄັ້ງທຳອິດຢູ່ໜອງບອນ. ແຕ່ປີ 1979 ຮອດ 83 "ການອອກແຮງງານລວມ" ແມ່ນຊີວິດທີ່ຟົດຟື້ນຂອງພະນັກງານຢູ່ທຸກກະຊວງ ກອນຈຶ່ງອອກມາແບບນີ້.

ຄິດເມື່ອຄາວກ່ອນກີ້ ນ້ອງຢູ່ນຳ "ເຂົາ"
ຫລົງເພີດເພີນນຳຍົດ ຫລອກລວງຄຳຍ້ອງ
ບໍ່ທ່ອນເຄີຍຄອຍເອື້ອ ຊາວປະຊານ້ອງພີ່
ໃຜຈະທຸກຍາກຍ້ອນ ເຂັນໄຮ້ກໍຊ່າງຕາມ

ຊີວິດຢູ່ແຕ່ລະມື້ ເມົາມ່ວນມົວສະໜຸກ
ສຸກຢູ່ບົນຄວາມທຸກ ລາສະດອນ ຄາງຮ້ອງ
"ເຂົາ" ອອຍເອົາເງິນຈ້າງ ໃຫ້ນາງເລງລິ້ວທ່ຽວ
ບໍ່ຮ່ຳຮອນຢາກສ້າງ ເມືອງບ້ານໃຫ້ຮຸ່ງສີ

ນ້ອງບໍ່ໄດ້ຊວາດຮູ້ ວ່າປວງຊາດພວມຈົມ
ດິນລາວເປັນດິນແດນ ບ່ອນເຂົາສະແຫວງໃຊ້
ເພພັງມ້າງ ທຳລາຍລ້າງຜ່າ
ບ້ານແຕກສາຍແຫລກຮ້າງ ຮາມໄດ້ຢູ່ດີ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ